# ຮັບການປະກັນສຸຂະພາບທີ່ທ່ານ ຕ້ອງການ ເພື່ອໃຫ້ສຸຂະພາບດີຢູ່ສະເໝີ

Washington Healthplanfinder™ ຄື ຕະຫຼາດຊື້-ຂາຍອອນລາຍຂອງລັດ ທີ່ປະຊາຊົນໃນລັດ Washington ສາມາດເລືອກຊື້, ປຽບທຽບ ແລະ ສະໝັກການປະກັນສຸຂະພາບ ແລະ ທັນຕະກຳທີ່ມີຄຸນນະພາບ. ອີງຕາມລາຍໄດ້ ແລະ ຂະໜາດຄົວເຮືອນຂອງທ່ານ, ທ່ານອາດມີສິດສຳລັບສ່ວນຫຼຸດຂອງລັດຖະບານກາງ ແລະ/ຫຼື ຂອງລັດ ທີ່ສາມາດຫຼຸດຄ່າໃຊ້ຈ່າຍປະກັນໄພໃນແຕ່ລະເດືອນຂອງທ່ານ. ນອກຈາກນັ້ນ, ທ່ານອາດເຂົ້າເກນ ແລະ ລົງທະບຽນໃນ Washington Apple Health (Medicaid).

ທ່ານສາມາດສະໝັກ ການປະກັນສຸຂະພາບ ແລະ ທັນຕະກຳ ໃນລະຫວ່າງການລົງທະບຽນແບບເປີດ (ເລີ່ມຕັ້ງແຕ່ວັນທີ 1 ພະຈິກ) ຫຼື ພາຍໃນ 60 ວັນ ຫຼັງຈາກເຫດການຊີວິດທີ່ເຂົ້າເງື່ອນໄຂ. ເຫດການຊີວິດທີ່ເຂົ້າເງື່ອນໄຂລວມເຖິງ ການສູນເສຍການຄຸ້ມຄອງຂອງນາຍຈ້າງ, ການປ່ຽນແປງໃນລາຍໄດ້ ຫຼື ຂະໜາດຄົວເຮືອນ ແລະ ອື່ນໆ ອີກ. Apple Health ມີໃຫ້ບໍລິການໝົດປີ.

## ໃນ Washington Healthplanfinder, ທ່ານຈະພົບເຫັນ:

- ສ່ວນຫຼຸດທີ່ພິເສດ ເພື່ອຊ່ວຍປະຢັດຄ່າໃຊ້ຈ່າຍປະກັນໄພ ໃນແຕ່ລະເດືອນຂອງທ່ານ.
- ແຜນການຄຸນນະພາບ ທີ່ຄຸ້ມຄອງສິດຜົນປະໂຫຍດທາງດ້ານສຸຂະພາບທີ່ຈຳເປັນ 10 ລາຍການ ເຊັ່ນ: ການດູແລປ້ອງກັນ, ການບໍລິການສຸຂະພາບຈິດ, ການດູແລກ່ອນຄາດ ແລະ ອື່ນໆ ອີກ.
- ມີການຊ່ວຍເຫຼືອເພື່ອລົງທະບຽນຟຣີທົ່ວລັດ.

## ວິທີການສະໝັກ

ເຂົ້າເບິ່ງ **www.wahealthplanfinder.org** ຫຼື ສະແກນລະຫັດ QR ເພື່ອລົງທະບຽນ.

## ຕ້ອງການຄວາມຊ່ວຍເຫຼືອບໍ່?

ເຄືອຂ່າຍຜູ້ຊ່ວຍເຫຼືອທົ່ວລັດຂອງພວກເຮົາ ສາມາດຊ່ວຍໃຫ້ທ່ານເລືອກຊື້ແຜນການ, ເຂົ້າໃຈຄວາມຊ່ວຍເຫຼືອທາງດ້ານການເງິນ ແລະ ຊ່ວຍໃຫ້ທ່ານສະໝັກ. ເຂົ້າເບິ່ງ wahealthplanfinder.org ເພື່ອຊອກຫາແຫຼ່ງຊ່ວຍເຫຼືອທີ່ເຊື່ອຖືໄດ້ ໃນພື້ນທີ່ຂອງທ່ານ.

ນອກຈາກນັ້ນ, ທ່ານຍັງສາມາດໂທຫາ ສູນບໍລິການລູກຄ້າຂອງພວກເຮົາທີ່ 1-855-923-4633. ມີການຊ່ວຍເຫຼືອທາງດ້ານພາສາ ສຳລັບຫຼາຍກວ່າ 200 ພາສາທີ່ແຕກຕ່າງກັນ.



washington healthplanfinder

click. compare. covered.

**1-855-923-4633**
**wahealthplanfinder.org**